ແຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 4 ມີນາ 2007 ( 03- 04 -2007)

---

## ພຣະເຢຊູຊົງໃຫ້ອະພັຍບາບແກ່ພວກເຮົາ:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຣັມ 8:2-11, 30-36

**ຄວາມຈິງໃນພຣະຄັມພີ:** ພຣະເຢຊູຈະຊົງໃຫ້ອະພັຍແກ່ຂ້າພະເຈົ້າໄດ້ບໍ່ ເຖິງແມ່ນບັນຫານັ້ນຈະນ້ອຍຫລືໃຫຍ່?

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານໃຫ້ທ່ານຄົ້ນພົບວ່າພຣະເຢຊູໄດ້ຊົງເຮັດສິ່ງໃດແດ່ເພື່ອພວກເຮົາໂດຍ:.

- ເຂົ້າໃຈວ່າ ບາບຈະຮ້າຍແຮງຂນາດໃດ ກໍຈະບໍ່ຢູ່ເໜືອຄວາມສາມາດຂອງພຣະເຢຊູທີ່ຈະໃຫ້ອະພັຍ ແລະ
- ຍອມຮັບການປ່ຽນແປງເພື່ອຈະມີຊີວິດທີ່ບໍຣິສຸດ ເພາະພຣະເຢຊູໄດ້ຊົງໃຫ້ອະພັຍຄວາມບາບຂອງພວກທ່ານແລ້ວ.

### ການຈັດຕຽມຂອງຄຣູ:

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "ແຜນການສອນ", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້.
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ:

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### ບົດນຳ:

1. ນຳພານັກຮຽນໃນຈຸທີ່ວ່າ **ພຣະເຢຊູຄຣິດໄດ້ຊົງເຮັດຫຍັງໃຫ້ພວກເຮົາ?**
2. ຂຽນ " **ຂ່າວດີ** " ໃສ່ກະດານ, ແລະບອກວ່າ **ພຣະເຢຊູໄດ້ຊົງໃຫ້ອະພັຍ ນັ້ນເປັນຂ່າວດີແກ່ທຸກ ໆ ຄົນ,**

### 1. ຈັບໄດ້ໃນຂນະທີ່ເຮັດຢູ່: ( ໂຢຣັມ 8:2-4)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຣັມ 8:2-4
2) ແມ່ນເຣື່ອງຫຍັງຂອງຜູ້ຍິງຄົນນັ້ນທີ່ເຮັດຜິດທີ່ພວກເຮົາໄດ້ຮູ້?
3) ຜູ້ຍິງຄົນນີ້ມີຄວາມຜິດໃນເຣື່ອງຫຍັງ?

4) ຜູ້ຍິງຄົນນີ້ໄດ້ຮູ້ສຶກແນວໃດໃນຂນະທີ່ຕົນຖືກຈັບຢູ່ນັ້ນ?

5) ເຂົາຄິດວ່າຜູ້ຍິງຄົນນີ້ທຳຜິດເຖິງຂນາດໃດ?

6) ແຕ່ແລ້ວລາວກໍບໍ່ໄດ້ຖືກທຳໂທດເພາະດ້ວຍເຫດໃດ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນ:</u> ໂຢຮັນ 8:2-4

1) ຜູ້ຍິງຄົນນີ້ໄດ້ເຮັດຜິດດ້ວຍເຫດຜົນອັນໃດ?

2) ພວກເຮົາຮູ້ສຶກຜິດແຕ່ເຣື່ອງບາບເທົ່ານັ້ນບໍ ທີ່ພວກເຮົາຖືກຈັບໄດ້? ເປັນດ້ວຍເຫດໃດຈຶ່ງຮູ້ສຶກຢ່າງນັ້ນ ຫລືເປັນດ້ວຍເຫດໃດຈຶ່ງບໍ່ຮູ້ສຶກຢ່າງນັ້ນ?

3) ພວກຟາຣີຊາຍເອົາຜູ້ຍິງຄົນນີ້ໄປໄວ້ໃສ?

4) ຄວາມຜິດບາບໄດ້ປະຈານເຮົາແນວໃດໃນເຣື່ອງນີ້?

## 2. ລົງໂທດດ້ວຍບັນຍັດຂອງພຣະເຈົ້າ: ( ໂຢຮັນ 8:5-6)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 8:5-6; ລະບຽບພວກເລວີ 20:10; ແລະ ພຣະບັນຍັດ 22:22. ແລ້ວຖາມນັກຮຽນວ່າ: ແມ່ນຫຍັງເປັນສິ່ງທີ່ສຳຄັນທີ່ເຂົາເຈົ້າໄດ້ຮຽນຈາກພຣະທັມຂໍ້ຕ່າງ ໆ ນີ້.

2) ທ່ານຈະອະທິບາຍໃຫ້ຜູ້ທີ່ເຂົາຖຽງທ່ານວ່າເຂົາບໍ່ໄດ້ເປັນຄົນຜິດບາບນັ້ນຢ່າງໃດ?

3) ເປັນຫຍັງຫົວໜ້ານັກທັມຈຶ່ງເອົາພຣະຄຳຂອງພຣະເຈົ້າມາເປັນອາວຸດຕໍ່ສູ້ຜູ້ຍິງຄົນນີ້? ແລະເປັນຫຍັງເຂົາຈຶ່ງໃຊ້ຜູ້ຍິງຄົນນີ້ເປັນເໝືອນອາວຸດມາຕໍ່ສູ້ພຣະເຢຊູ?

4) ພຣະຄຳຂອງພຣະເຈົ້າເປັນອາວຸດຊະນິດໃດ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ໂຢຮັນ 8:5-6

1. ຫົວໜ້າພວກຄົນຢິວໄດ້ໃຊ້ພຣະຄຳຂອງພຣະເຈົ້າໄປໃນທາງທີ່ຜິດແລະຖືກ ໃນທຳນອງໃດ?
2. ພຣະເຈົ້າໄດ້ຊົງໃຊ້ພຣະຄຳຂອງພຣະອົງຈັດການກັບຄວາມຜິດບາບໃນຊີວິດພວກເຮົາບໍ່?

## 3. ເລີ້ມຕົ້ນໃໝ່ທີ່ເປັນໄປໄດ້: ( ໂຢຮັນ 8:6-11)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຢຮັນ 8:6-11

2) ພຣະເຢຊູໃຫ້ເງື່ອນໄຂການຄວ່າງກ້ອນຫີນໃສ່ຍິງຄົນນັ້ນຢ່າງໃດ?

3) ແມ່ນໃຜເປັນຜູ້ທີ່ນຶ່ງໃນທີ່ນັ້ນທີ່ພົບສະພາບຢ່າງນັ້ນ?

4) ລາວໄດ້ເຮັດຫຍັງແທນທີ່ຈະຄວ່າງກ້ອນຫີນໃສ່ນາງ?

5) ຜູ້ຍິງຄົນນັ້ນສົມຄວນຈະໄດ້ຮັບກ້ອນຫີນເປັນການຕັດສິນ ແຕ່ແລ້ວລາວກໍໄດ້ຮັບພຣະຄຳອັນອ່ອນຫວານຂອງການໃຫ້ອະພັຍແທນ.

6) ພຣະເຢຊູຄຣິດໄດ້ຊົງກະທຳສິ່ງໃດແກ່ພວກເຮົາ ແລະພຣະອົງຊົງມີພຣະປະສົງອັນໃດຈາກພວກເຮົາໃນເມື່ອພວກເຮົາຜິດບາບ?

7) ພຣະເຢຊູຄຣິດໄດ້ຊົງມີຄວາມເມດຕາສົງສານ ແລະຍັງເປັນແບບຢ່າງໃຫ້ແກ່ຜູ້ທີ່ທໍຣະຍົດຕໍ່ສູ້ພຣະອົງ. ແຕ່ເມື່ອໃດພວກເຮົາຫາກສາຣະພາບຄວາມຜິດຄວາມບາບຂອງພວກເຮົາ, ພວກເຮົາກໍສາມາດເຊື່ອໄວ້ວາງໃຈໃນພຣະເຈົ້າທີ່ໄດ້ຊົງໃຫ້ອະພັຍແກ່ພວກເຮົາເພາະການທີ່ພຣະເຢຊູຄຣິດໄດ້ເຮັດໃຫ້ສຳເຣັດເທິງໄມ້ກາງແຂນນັ້ນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ໂຢຮັນ 8:6-11

1. ຄວາມຄາດຫວັງຂອງຜູ້ຍິງຄົນນັ້ນແມ່ນຫຍັງ?
2. ລາວໄດ້ຮັບຫຍັງແທນການໄດ້ຮັບກ້ອນຫີນ?
3. ທ່ານຄິດວ່າພວກຜູ້ຊາຍເຖົ້າໄດ້ພາກັນໜີອອກໄປກ່ອນເພາະເຫດໃດ?
4. ຫລັງຈາກຜູ້ຍິງຄົນນີ້ໄດ້ພົບພຣະເຢຊູແລ້ວຊີວິດຂອງລາວເປັນຢ່າງໃດ?

3. **<u>ຜູ້ປະທານອິສຣະພາບທີ່ແທ້ຈິງ:</u>** ໂຢຮັນ 8:30-36
1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 8:30-36
2) ພຣະເຢຊູຄຣິດໄດ້ບັນລະຍາຍກ່ຽວກັບຜູ້ທີ່ທຳຜິດບາບຢ່າງໃດ?
3) ສົນທະນາເຣື່ອງບາບກັນຈັກນ່ອຍວ່າ ບາບເປັນຄືທາດຮັບໃຊ້ແນວໃດ?
4) ເປັນຫຍັງຈຶ່ງວ່າການທີ່ຮູ້ຈັກພຣະເຢຊູ ແລະພຣະທັມຄຳສອນຂອງພຣະອົງແລ້ວເຮັດໃຫ້ພວກເຮົາໄດ້ຮັບການປົດ ປ່ອຍຈາກບາບ?
5) ການສຶກສາຂອງຜູ້ຍິງໃນສມັຍນີ້ໄດ້ຜ່ານການປະຕິບັດຕາມພຣະທັມຄຳສອນຢ່າງມີອິສຣະພາບແນວໃດແດ່?
6) ພຣະເຢຊູຄຣິດ ໃຫ້ອະພັຍບາບ. ອິສຣະພາບ ເສຣີພາບເປັນການກະທຳຕາມພຣະປະສົງຂອງພຣະອົງຊຶ່ງບໍ່ແມ່ນ ເພາະຂ້ອຍຕ້ອງການ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດໃນພຣະຄັມພີ:</u>** ໂຢຮັນ 8:30-36
1) ສິ່ງທີ່ຢືນຢັນວ່າພວກເຮົາໄດ້ຮັບການອະພັຍຈາກພຣະເຢຊູຄຣິດ ແລະເປັນພຣະເຈົ້າເໜືອຊີວິດຂອງເຮົາ?
2) ພວກເຮົາຕ້ອງດຳເນີນຕາມຄຳສອນຂອງພຣະອົງຢ່າງໃດ?
3) ອິສຣະພາບໃນການດຳເນີນຕາມຊີວິດຂອງຕົນເອງນັ້ນໄດ້ເຮັດໃຫ້ທ່ານເປັນທາດຂອງຄວາມບາບຢ່າງໃດ?
4) ຄວາມຈິງ ສັຈທັມໄດ້ປົດປ່ອຍທ່ານອອກຈາກບາບ ແລະການເຮັດຜິດຫຍັງແດ່?

**<u>ສລູບ:</u>**
1. ຈົດຈຳສິ່ງທີ່ສຳຄັນໃນບົດຮຽນໃນມື້ນີ້ ແລະນຳໄປເປັນຕົວຢ່າງໃນການປະກາດ ຫລືສອນຕໍ່ໄປ.
2. ນຳເຣື່ອງຂອງຜູ້ຍິງຄົນນີ້ ທີ່ນາງຖືກໃຫ້ອະພັຍໂດຍພຣະເຢຊູຄຣິດໄປເປັນພຍານ.
3. ຄຳພຍານຂອງມິດຊັນນາຣີຄວນຈະເປັນຄຳພຍານຂອງຜູ້ຍິງຄົນນີ້ໃນພຣະທັມ ໂຢຮັນບົດທີ 8 ນີ້.
4. ພວກເຮົາຈະເປັນພຍານໃນເຣື່ອງນີ້ແນວໃດ?
5) ໜູນໃຈນັກຮຽນໃຫ້ເອົາບົດຮຽນນີ້ໄປສຶກສາຄົ້ນຄວ້າຄືພາຍໃນອາທິດນີ້.
6) ໃຫ້ພິຈາຣະນາເບິ່ງວ່າ ພຣະເຢຊູຄຣິດພ້ອມທີ່ຈະໃຫ້ອະພັຍແກ່ທຸກຄົນທີ່ຍອມຮັບຈາກພຣະອົງ.
7) ໜູນໃຈໃຫ້ທຸກຄົນໂຊ ຄວາມກະຕັນຍູຂອງຕົນໂດຍທາງການກຳຮົງຊີວິດເພື່ອຖວາຍກຽດແດ່ພຣະອົງ.
8. ອະທິຖານທູນຂໍຕໍ່ພຣະເຈົ້າໃຫ້ເສີມຄວາມເຂົ້າໃຈ ແລະຄວາມເຊື່ອໃນການປົດຫ້ອງຮຽນ.

ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ J.H.